**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງໄຊສົມບູນ

ເລກທີ: 0315/ຈຂ.ຊບ

ໄຊສົມບູນ, ວັນທີ: 14 ມີນາ 2024

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາ ສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ແຂວງໄຊສົມບູນ

- ອີງຕາມກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ່ III ໝວດທີ IV ມາດຕາ 19, 20 ວ່າດ້ວຍພາລະບົດບາດສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ ( ສະບັບປັບປຸງ ) ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ II (2021-2025) ເປັນແຜນສືບຕໍ່ຈັດຕັ້ງປະຕິບັດຍຸດທະສາດພັດທະນາເສດຖະກິດ-ສັງຄົມ 10 ປີ (2016-2025) ແລະ ວິໄສທັດຮອດປີ 2030 ຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ I ໄລຍະຮອດປີ 2030 ຊຶ່ງມະຕິຂອງກອງປະຊຸມໃຫຍ່ຄັ້ງທີ 1 ອົງຄະນະພັກແຂວງໄຊສົມບູນ ກຳນົດໄວ້;
- ອີງຕາມ ມະຕິກອງປະຊຸມສະໄຫມສາມັນເທື່ອທີ່ 6 ຂອງສະພາປະຊາຊົນແຂວງຊຸດທີ II, ຄັ້ງວັນທີ 24 ມັງກອນ 2024.

## ເຈົ້າແຂວງໄຊສົມບູນ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດແຜນຜັງ, ຫຼັກການ, ລະບຽບການ ແລະ ມາດຕາການ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ, ເພື່ອເຮັດໃຫ້ເຂດດັ່ງກ່າວກາຍເປັນເຂດພັດທະນາ ທີ່ມີຄຸນປະໂຫຍດສູງສຸດ ແລະ ຍືນຍົງ, ສອດຄ່ອງກັບພູມມີທັດ, ປົກປັກຮັກສາຄູກັນນ້ຳ (ຕາຝັ່ງເຈື່ອນ) ຢ່າງຖາວອນ, ອະນຸລັກລະບົບນິເວດວິທະຍາຂອງສາຍນ້ຳຈັ້ງ ແລະ ສາມາດຮັບມືກັບການປ່ຽນແປງດິນຟ້າອາກາດໃນອະນາຄົດ.

**ມາດຕາ 2 ສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ**

ສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນແມ່ນພື້ນທີ່ຕາມສອງຟາກສາຍນ້ຳຈັ້ງ ມີຄວາມຍາວ 9,914 ກິໂລແມັດ, ຊຶ່ງປະກອບດ້ວຍ: ສາຍນ້ຳຈັ້ງ, ເຂດປ້ອງກັນຕາຝັ່ງເຈື່ອນ ຫຼື ເຂດຄ້ອຍຊັນ, ຄູກັນນ້ຳ, ຂອບເຂດທາງປູຢາງສອງຟາກ, ເຂດສວນສາທາລະນະ 3 ແຫ່ງ ແລະ ກິດຈະການຕ່າງໆອ້ອມຮອບໃນບໍລິເວນດັ່ງກ່າວ.

ເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນນ້ຳຈັ້ງ ຍັງຈັດເປັນຈຸດເດັ່ນຂອງຕົວເມືອງ, ໂດຍຈະຖືກພັດທະນາ, ນຳໃຊ້ ແລະ ຄຸ້ມຄອງຕາມກົດລະບຽບຄຸ້ມຄອງຕົວເມືອງອະນຸວົງ ເທດສະບານແຂວງ (ຕາມຂໍ້ຕົກລົງຂອງທ່ານ ເຈົ້າແຂວງໄຊສົມບູນ ສະບັບເລກທີ 921/ຈຂ.ຊບ, ລົງວັນທີ 6 ກັນຍາ 2016 ວ່າດ້ວຍ ຮັບຮອງກົດລະບຽບການຄຸ້ມຄອງຕົວເມືອງອະນຸວົງ ເທດສະບານແຂວງ ໃຫ້ມີປະສິດທິຜົນ, ມີຄວາມຍືນຍົງ, ສອດຄ່ອງກັບທິດທັດທຳມະຊາດ ແລະ ວັດທະນະທຳຊາວແຂວງໄຊສົມບູນ ສະໄໝປະຍຸກ.

**ມາດຕາ 3 ອະທິບາຍຄຳສັບ**

**ຄຳສັບຕ່າງໆ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງຕໍ່ໄປນີ້:**

1. **ການດຳເນີນກິດຈະການກໍ່ສ້າງ** ໝາຍເຖິງ ການກຳນົດໂຄງການລົງທຶນຂອງລັດ ຫຼື ເອກະຊົນ ທີ່ດຳເນີນການຈັດຕັ້ງປະຕິບັດວຽກງານກໍ່ສ້າງເຊັ່ນ: ການສຳຫຼວດ, ການກໍ່ສ້າງ, ສ້ອມແປງ, ການຂະຫຍາຍ, ການດັດແປງ, ການຕໍ່ເຕີມ, ການຖົມດິນ, ການຕັ້ງຮ້ານຂາຍເຄື່ອງ, ຕິດຕັ້ງປ້າຍ, ການທັບມ້າງ, ການຄຸ້ມຄອງ, ການກວດກາ ແລະ ຄວບຄຸມໂຄງ ການກໍ່ສ້າງກິດຈະການທາງນ້ຳ.
2. **ການປ່ຽນແປງສະພາບທຳມະຊາດ** ໝາຍເຖິງ ການປ່ຽນແປງສະພາບຕາຝັ່ງ, ພື້ນດິນ, ແລວນ້ຳໄຫຼ ແລະ ສະພາບນິເວດວິທະຍາອື່ນໆ ໃນເຂດດັ່ງກ່າວ ດ້ວຍການກະທຳຕ່າງໆຂອງຄົນເຊັ່ນ: ການຂຸດ, ການຈົກ, ດູດເອົາຫີນແຮ່-ຊາຍ ແລະ ດິນດຳ, ການຕໍ່ເຕີມຕາຝັ່ງດ້ວຍການຖົມດິນ, ຖົມຫີນ, ການເທເບຕົງ, ການເຮັດຊານນ້ຳ, ການຕອກເສົາເຂັມ, ການປ່ອຍນ້ຳເປື້ອນ, ນ້ຳມີສານເຄມີ, ນ້ຳໂສໂຄກ ແລະ ນ້ຳຂີ້ສີກ ລົງໃນນ້ຳ ແລະ ດ້ວຍການປ່ຽນແປງເອງຕາມທຳມະຊາດຂອງແຫຼ່ງນ້ຳ.
3. **ກິດຈະກຳຢູ່ໃນນ້ຳຈັ້ງ** ໝາຍເຖິງ ການຈັດກິດຈະກຳຕ່າງໆ ຢູ່ໃນນ້ຳຈັ້ງ ທີ່ຈັດຂຶ້ນໃນຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ເຊັ່ນ: ການຊ່ວງເຮືອປະເພນີ, ການເດີນເຮືອທ່ອງທ່ຽວ, ການກໍ່ສ້າງເຮືອແພ, ການຕິດຕັ້ງປ້ຳນ້ຳ, ເຮືອສ່ວນຕົວ ຕາມແຕ່ລະວັງພັກນ້ຳ.
4. **ກິດຈະການຢູ່ເທິງໜ້າດິນ** ໝາຍເຖິງ ການຈັດກິດຈະກຳທຸກປະເພດ ຢູ່ໃນເຂດສວນສາທາລະນະ 3 ແຫ່ງ, ໃນຂອບເຂດເສັ້ນທາງປູຢາງສອງຟາກ ແລະ ເຂດຄູກັນນ້ຳ (ຄູກັນເຈື່ອນ).
5. **ເຂດປ້ອງກັນຕາຝັ່ງເຈື່ອນ ຫຼື ເຂດຄ້ອຍຊັນ** ໝາຍເຖິງ ຂອບເຂດພື້ນທີ່ການກໍ່ສ້າງກິດຈະການປ້ອງກັນຕາຝັ່ງເຈື່ອນ ເຊິ່ງກວມເອົາສັນຄູກັນນ້ຳ, ຂັ້ນໄດຂຶ້ນ-ລົງຂອງຕາຝັ່ງ, ປະຕູນ້ຳ, ສວນສາທາລະນະ ແລະ ເຂດສະຫງວນຢູ່ເທິງໜ້າດິນຂອງເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນນ້ຳຈັ້ງ.
6. **ເຂດສັນຄູກັນນ້ຳ (ຄູນ້ຳລົ້ນ)** ໝາຍເຖິງ ຄານຄູເກັບກັກນ້ຳຕາມແຕ່ລະຈຸດ ເພື່ອກັກນ້ຳໄວ້ເປັນວັງ ຫຼື ເອີ້ນວ່າຝາຍນ້ຳລົ້ນ.

7. **ສວນສາທາລະນະ** ໝາຍເຖິງ ບໍລິເວນສວນສາທາລະນະ 3 ແຫ່ງຢູ່ເຂດຕາຝັ່ງເຈື່ອນນ້ຳຈັ້ງ ຊຶ່ງລວມເອົາຕົ້ນໄມ້, ດອກໄມ້, ສວນຫຍ້າ, ຮູບປັ້ນ, ນ້ຳພຸ, ເຂດຖ້ຳ ແລະ ສິ່ງກໍ່ສ້າງສາທາລະນຸປະໂຫຍດຕ່າງໆ.

8. **ລະບົບນິເວດ** ໝາຍເຖິງ ສາຍພົວພັນທີ່ກ່ຽວພັນກັນທັງທາງບວກ ແລະ ທາງລົບ ລະຫວ່າງສິ່ງທີ່ມີຊີວິດ ແລະ ສິ່ງທີ່ບໍ່ມີຊີວິດ ທີ່ຄົງຕົວຢູ່ໃນທຳມະຊາດ;

**ມາດຕາ 4 ຂອບເຂດນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບອົງການຈັດຕັ້ງພັກ, ລັດ, ການຈັດຕັ້ງມະຫາຊົນ, ສັງຄົມ, ບຸກຄົນ ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນຕາຝັ່ງເຈື່ອນ.

## ໝວດທີ 2
## ທີ່ຕັ້ງ, ຂອບເຂດ ແລະ ອົງປະກອບ

**ມາດຕາ 5 ທີ່ຕັ້ງ**

ສາຍນ້ຳຈັ້ງຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ຕັ້ງຢູ່ບ້ານພູຫົວຊ້າງ ເມືອງອະນຸວົງ ເທດສະບານແຂວງໄຊສົມບູນ.

**ມາດຕາ 6 ຂອບເຂດ**

ຂອບເຂດຂອງສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນແມ່ນລຽບຕາມແຄມນ້ຳຈັ້ງ ຕັ້ງແຕ່ຂົວເຫຼັກ ບໍລິເວນສວນສາທາລະນະຖ້ຳເຈົ້າອະນຸວົງ ຫາ ຈຸດທ້ອຍສົ່ງກາດໄຫຼປ່ອງສູ່ນ້ຳຈັ້ງ (ນອນໃນຂອບເຂດກຳນົດຂອງຜັງເມືອງ) ມີຄວາມຍາວທາງໝົດ 9,914 ກິໂລແມັດ ຊຶ່ງກວມເອົາພື້ນທີ່ສວນສາທະນະແຫ່ງທີ່ 1, ແຫ່ງທີ່ 2 ເຂດສະຫງວນຈາກຂອບທາງປູຢາງສອງຊັ້ນ ຢູ່ 2 ຝາກ ແມ່ນປະຕິບັດຕາມກົດລະບຽບຄຸ້ມຄອງຜັງເມືອງເທດສະບານແຂວງໄຊສົມບູນ.

**ມາດຕາ 7 ອົງປະກອບ**

ອົງປະກອບຫຼັກຂອງສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນແມ່ນປະກອບດ້ວຍ: ຄູກັນນ້ຳ, ເຂດປ້ອງກັນຕາຝັ່ງເຈື່ອນ ຫຼື ເຂດຄ້ອຍຊັນ, ເສັ້ນທາງປູຢາງລຽບເທິງຄູກັນນ້ຳສອງຝາກ ພື້ນທີ່ສວນສາທາລະນະຖ້ຳເຈົ້າອະນຸວົງ, ສວນສາທະນະແຫ່ງທີ່ 1 ແລະ ແຫ່ງທີ່ 2 ພ້ອມດ້ວຍເດີ່ນຈອດລົດ, ບັນດາຊັບພະຍາກອນທຳມະຊາດທີ່ມີຊີວິດ ແລະ ບໍ່ມີຊີວິດທີ່ນອນໃນພື້ນທີ່ ແລະ ສິ່ງກໍ່ສ້າງສາທາລະນຸປະໂຫຍດທັງໝົດໃນເຂດສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ໃນລວງຍາວທັງໝົດ 9,914 ກມ.

## ໝວດທີ 3

## ການຈັດສັນ ແລະ ພັດທະນາ

## ສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ

**ມາດຕາ 8 ການຈັດສັນ ແລະ ພັດທະນາພື້ນທີ່ໜ້ານ້ຳ**

1. ເຂດວັງນ້ຳແຕ່ລະວັງແຕ່ຂົວເຫຼັກເຂດສວນສາທາລະນະຖ້ຳເຈົ້າອະນຸວົງ ຫາ ຈຸດຫ້ວຍສັງກາດໄຫຼປ່ອງສູ່ນ້ຳຈັ້ງ ແມ່ນຈັດສັນເປັນບ່ອນຢູ່ອາໄສຂອງສັດນ້ຳ ເປັນຕົ້ນ: ປາ, ປູ, ກຸ້ງ, ຫອຍ ແລະ ສັດນ້ຳອື່ນໆ; ເຮັດກິດຈະກຳກິລາເທິງນ້ຳ ເຊັ່ນ: ການຊ່ວງເຮືອ, ເສັ້ນທາງເດີນເຮືອທ່ອງທ່ຽວ;
2. ປະຕູນ້ຳຢູ່ເທິງຂົວນ້ຳຈັ້ງ 1 ແມ່ນໃຊ້ເປັນບ່ອນກັກນ້ຳໄວ້ເພື່ອຮັບໃຊ້ກິດຈະກຳຕ່າງໆເທິງໜ້ານ້ຳ ແລະ ໃຊ້ເປັນທາງຍ່າງຂ້າມນ້ຳຈັ້ງ; ສັນຄູກັນນ້ຳຢູ່ແຕ່ລະຈຸດແມ່ນໃຊ້ສະເພາະກັກນ້ຳໄວ້ເປັນວັງເພື່ອເປັນບ່ອນອາໄສຂອງສັດນ້ຳ ແລະ ເພື່ອຈຳກັດການໄຫຼແຮງຂອງນ້ຳຈັ້ງ, ບໍ່ຮັບໃຊ້ເປັນທາງຍ່າງຂ້າມນ້ຳ.

**ມາດຕາ 9 ການຈັດສັນ ແລະ ພັດທະນາພື້ນທີ່ຢູ່ເຂດປ້ອງກັນຕາຝັ່ງເຈື່ອນ ແລະ ເສັ້ນທາງປູຢາງສອງຊັ້ນ ສອງຝາກ ນ້ຳຈັ້ງ**

1. ເຂດປ້ອງກັນຕາຝັ່ງເຈື່ອນ ຫຼື ເຂດຄ້ອຍຊັນ (ຈາກເຂດພື້ນຕີນຕາຝັ່ງເຈື່ອນ ຫາ ທາງປາງ) ໃຫ້ຮັກສາກິດຈະການກໍ່ສ້າງໄວ້ດັ້ງເດີມ (ບໍ່ໃຫ້ມີການພັດທະນາເພີ່ມເຕີມ);
2. ເສັ້ນທາງປູຢາງ 2 ຊັ້ນຢູ່ສອງຝາກ ແຕ່ ເຂດສວນສາທາລະນະຖ້ຳເຈົ້າອະນຸວົງ ຫາ ຈຸດຫ້ວຍສັງກາດໄຫຼປ່ອງສູ່ນ້ຳຈັ້ງ (ນອນໃນຂອບເຂດກຳນົດຂອງຜັງເມືອງ) ມີຄວາມຍາວທັງໝົດ 9,914 ກິໂລແມັດ ແມ່ນຈັດສັນໃຫ້ສະເພາະລົດແລ່ນ, ສ່ວນຂອບທາງ ແລະ ທາງຍ່າງ ໃຫ້ໃຊ້ເປັນທາງຍ່າງເທົ່ານັ້ນ;
3. ຮາວເຫຼັກ ຢູ່ຂອບທາງຍ່າງ ສອງຝາກ ແມ່ນໃຊ້ເປັນຮາວກັນຕົກ;
4. ທາງຂຶ້ນ-ລົງ (ຈາກເຂດພື້ນຕີນຕາຝັ່ງເຈື່ອນຫາ ທາງປາງ) ທີ່ໄດ້ກໍ່ສ້າງໄວ້ທຸກໆ 200 ແມັດ ຄູ່ທັງສອງຝາກແມ່ນໃຫ້ໃຊ້ເປັນທາງຍ່າງເມື່ອມີກິດຈະກຳທີ່ພົວພັນກັບໜ້ານ້ຳ ຫຼື ບໍລິການການທ່ອງທ່ຽວຕ່າງໆ ;
5. ຈຸດປາກທໍ່ນ້ຳຢູ່ສັນຄູກັນນ້ຳສອງຝາກ ແມ່ນຮັກສາໄວ້ເປັນບ່ອນນ້ຳໄຫຼອອກມາຈາກທົ່ງນາ ຫຼື ຈາກສາຍນ້ຳສາຂາ ສູ່ນ້ຳຈັ້ງ;
6. ຂົວເຫຼັກກົ່ງຂ້າມນ້ຳຈັ້ງ 2 ຈຸດ: ຈຸດທາງທີ່ 1 - ຢູ່ທາງເບຕົງຖະໜົນອະນຸວົງ ແລະ ຈຸດທີ 2 - ຢູ່ຈຸດສຸດທ້າຍ ຈາກຂົວເຫຼັກຫ້ວຍປາຕີນໃຫ່ຍ ແມ່ນໃຊ້ສະເພາະລົດຈັກ ແລະ ຄົນຍ່າງເທົ່ານັ້ນ.

**ມາດຕາ 10 ການຈັດສັນ ແລະ ພັດທະນາພື້ນທີ່ສວນສາທາລະນະ ແຫ່ງທີ່ 1, ແຫ່ງທີ່ 2 ແລະ ສວນສາທະນະຖ້ຳເຈົ້າອະນຸວົງ**

1. ສວນສາທາລະນະ ແຫ່ງທີ່ 1 (ຢູ່ຂ້າງປະຕູນ້ຳ) ແລະ ແຫ່ງທີ່ 2 ຢູ່ກ້ອງຂົວນ້ຳຈັ້ງ 2ໃຊ້ເປັນສະຖານທີ່ທ່ອງທ່ຽວ, ອອກກຳລັງກາຍ, ບ່ອນເປັນຈັດກິດຈະກຳສຳລັບເດັກ ຫຼື ອື່ນໆ ແລະ ເປັນບ່ອນຈອດລົດໃຫຍ່, ລົດຈັກ ແລະ ລົດຖີບ; ຫ້ອງນ້ຳສາທາລະນະມີແຫ່ງລະ 2 ຈຸດ;
2. ສວນສາທາລະນະຖ້ຳເຈົ້າອະນຸວົງ ການຈັດສັນພື້ນທີ່ສວນສາທາລະນະຖ້ຳເຈົ້າອະນຸວົງ ໃຫ້ປະຕິບັດດັ່ງນີ້:

   2.1 ເດີ່ນຈອດລົດ ຝາກກົງກັນຂ້າມກັບປາກຖ້ຳ ແມ່ນຈັດສັນເປັນສະຖານທີ່ຈອດລົດໃຫ່ຍ,

   ລົດຈັກ, ລົດຖີບ; ປ້ອມຍາມທາງເຂົ້າ 1 ຈຸດ ແລະ ມີປ້ອມຍາມທາງອອກ 2 ຈຸດ; ຫ້ອງນ້ຳສາທາລະນະ 2 ຈຸດ;

2.2 ສອນສາທາລະນະເບື້ອງປາກຖ້ຳ ແມ່ນຈັດສັນເປັນສະຖານທີ່ຂາຍເຄື່ອງທີ່ລະນຶກຜະລິດຕາພັນຫັດຖະກຳ ແລະ ວັດທະນະທຳລາວ, ເຄື່ອງທົ່ວໄປ, ຂາຍອາຫານ ແລະ ຈຸດຊົມທິວທັດ; ນ້ຳພຸວັງພະຍານາກ 15 ຕາກຸນ, ສະຖານທີ່ທ່ອງທ່ຽວກາງເວັນ, ກາງຄືນ ແລະ ກິດຈະກຳຕ່າງໆເພື່ອຮັບໃຊ້ສັງຄົມເປັນຕົ້ນການທ່ອງທ່ຽວ ແລະ ງານບຸນທາງວັດທະນະທຳ-ປະເພນີ; ຫ້ອງການຄຸ້ມຄອງສວນເຈົ້າອະນຸວົງ, ແທ່ນຕັ້ງອະນຸສາວະລີເຈົ້າອະນຸວົງ ແລະ ມີຫ້ອງນ້ຳສາທາລະນະ 2 ຈຸດ;

**ມາດຕາ 11 ການພັດທະນາເຂດອ້ອມຂ້າງຂອງສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ**

ທຸກສິ່ງປຸກສ້າງທັງສອງຝາກຂອງນ້ຳຈັ້ງຕັ້ງແຕ່ເຂດບໍລິເວນສວນສາທາລະນະຖ້ຳເຈົ້າອະນຸວົງ ຫາຈຸດຫ້ວຍສັງກາດໄຫຼປ່ອງສູ່ນ້ຳຈັ້ງ (ນອນໃນຂອບເຂດກຳນົດຂອງຜັງເມືອງ) ມີຄວາມຍາວທັງໝົດ 9,914 ກິໂລແມັດ ໃຫ້ພັດທະນາເປັນເຂດບໍລິການທ່ອງທ່ຽວ: ໂຮງແຮມ, ຮ້ານອາຫານ, ຮ້ານຂາຍຂອງທີ່ລະນຶກຕາມແຜນຜັງສະເພາະຂອງທາງການກຳນົດ ພ້ອມທັງບໍ່ໃຫ້ແອອັດ (ລາຍລະອຽດ ແມ່ນປະຕິບັດຕາມເຕັກນິກຂອງພະແນກ ໂຍທາທິການ ແລະ ຂົນສົ່ງແຂວງໄຊສົມບູນ ຈະໄດ້ກວດກາໃນເວລາອອກອະນຸຍາດປຸກສ້າງ).

## ໝວດທີ 4
## ການຄຸ້ມຄອງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ

**ມາດຕາ 12 ການຄຸ້ມຄອງ**

1. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຢາກພັດທະນາ, ນຳໃຊ້ກິດຈະການໃດໜຶ່ງຂອງສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ຕ້ອງປະຕິບັດຕາມຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ການຄຸ້ມຄອງ ສາຍນ້ຳຈັ້ງ ແລະ ເຂດບໍລິເວນຕາປ້ອງກັນຝັ່ງເຈື່ອນປະຕິບັດຕາມລະບຽບປະຕູດຽວພາຍໃຕ້ການຊີ້ນຳຂອງອົງການປົກຄອງແຂວງໄຊສົມບູນ.

**ມາດຕາ 13 ອົງການຄຸ້ມຄອງ**

ອົງການຄຸ້ມຄອງສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ລວມມີ:

1. ອົງການປົກຄອງແຂວງໄຊສົມບູນ;
2. ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງໄຊສົມບູນ;
3. ອົງການປົກຄອງເມືອງອະນຸວົງ;
4. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງອະນຸວົງ;
5. ອົງການປົກຄອງບ້ານພູຫົວຊ້າງ ແລະ ບ້ານຜາສະຫງົບ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງອົງການປົກຄອງແຂວງໄຊສົມບູນ**

1. ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້, ຮັບຜິດຊອບຕໍ່ຜົນໄດ້ ແລະ ຜົນເສຍ ຂອງຂັ້ນເທິງ ໃນການພັດທະນາຂອບເຂດດັ່ງກ່າວ;
2. ພິຈາລະນາ ກ່ຽວກັບແຜນການຄຸ້ມຄອງ, ກວດກາ ແລະ ຄວບຄຸມການອະນຸມັດປຸກສ້າງ, ສົ່ງເສີມການພັດທະນາ, ປະຕິບັດນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕາການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ ແລະ ການປະຕິບັດມາດຕາການທາງກົດໝາຍ ຕໍ່ທຸກພາກສ່ວນທີ່ລະເມີດຂໍ້ຫ້າມ ແລະ ການກະທຳຜິດອື່ນໆ ຂອງຂັ້ນລຸ່ມ.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງພະແນກ ໂຍທາທິການ ແລະ ຂົນສົ່ງແຂວງໄຊສົມບູນ**

1. ຮັບຜິດຊອບໂດຍກົງ ທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ນິຕິກຳອື່ນໆຂອງລັດ ທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ພັດທະນາສາຍນ້ຳຈັ້ງຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ;
2. ຄົ້ນຄວ້າທາງດ້ານວິຊາການໃນການອອກອະນຸຍາດປຸກສ້າງ ພ້ອມທັງຕິດຕາມ, ກວດກາການຈັດຕັ້ງປະຕິບັດທັງໝົດຕໍ່ກິດຈະການກໍ່ສ້າງ ແລະ ກິດຈະກຳຕ່າງໆ ໃນຂອບເຂດສາຍນ້ຳຈັ້ງຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ພ້ອມນຳສະເໜີການສ້ອມແປງ, ຟື້ນຟູຜົນເສຍຫາຍຢ່າງທັນການ;
3. ປະສານສົມທົບກັບທຸກພາກສ່ວນດຳເນີນທຸລະກິດ ທີ່ເຫັນວ່າມີການລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ພ້ອມທັງແນະນຳວິທີແກ້ໄຂບັນຫາ ໃນຂອບເຂດສາຍນ້ຳຈັ້ງຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ;
4. ຄົ້ນຄວ້າ ນຳສະເໜີອົງການປົກຄອງແຂວງໄຊສົມບູນເພື່ອອອກອະນຸຍາດກິດຈະການ, ການດຳເນີນໂຄງການ ແລະ ກິດຈະກຳຕ່າງໆ ທີ່ເຫັນວ່າການລະເມີດຂໍ້ຕົກລົງສະບັບນີ້ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ ຫຼື ປິດກິດຈະການ, ການດຳເນີນໂຄງການ ແລະ ກິດຈະການຕ່າງໆ ທີ່ເຫັນວ່າເປັນການລະເມີດຂໍ້ຕົກລົງສະບັບນີ້ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ;
5. ລາຍງານສ່ອງແສງ ເປັນປົກກະຕິ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ, ອົງການປົກຄອງແຂວງໄຊສົມບູນ ຮັບຊາບ ເພື່ອຊີ້ນຳກ່ຽວກັບຜົນໄດ້, ຜົນເສຍ ໃນການຄຸ້ມຄອງ, ການພັດທະນາສາຍນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ;
6. ຂຶ້ນແຜນງົບປະມານການຄຸ້ມຄອງປົກປັກຮັກສາ ແລະ ປັບປຸງກິດຈະກຳຕ່າງໆທີ່ມີຄວາມຈຳເປັນເພີ່ມຕື່ມ ສະເໜີແຂວງອະນຸມັດຕາມຄວາມເໝາະສົມ;

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງຫ້ອງການ ໂຍທາທິການ ແລະຂົນສົ່ງ ເມືອງອະນຸວົງ**

ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງອະນຸວົງ ມີສິດ ແລະ ໜ້າທີ່ໃນການສ້າງລະບຽບແບບແຜນສະເພາະຂອງຕົນໃນການຄຸ້ມຄອງສາຍນ້ຳຈັ້ງຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ, ຕິດຕາມ, ກວດກາການລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລ້ວລາຍງານໃຫ້ ພະແນກໂຍທາທິການ ແລະ ຂົນສົ່ງແຂວງໄຊສົມບູນ ຊາບ ເພື່ອດຳເນີນການແກ້ໄຂ ແລະ ປະຕິບັດໜ້າທີ່ ແລະ ສິດອື່ນຕາມການມອບໝາຍຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງໄຊສົມບູນ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງອົງການປົກຄອງເມືອງອະນຸວົງ**

1. ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ນິຕິກຳອື່ນໆ;
2. ຕິດຕາມ, ກວດກາ ແລະ ຕັກເຕືອນ ຜູ້ລະເມີດລະບຽບການຄຸ້ມຄອງສາຍນ້ຳຈັ້ງຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ແລ້ວລາຍງານຕໍ່ອົງການປົກຄອງແຂວງຊາບ ເພື່ອດຳເນີນການແກ້ໄຂຢ່າງທັນການ;
3. ປຸກຈິດສຳນຶກໃຫ້ປະຊາຊົນ ໃນການຄຸ້ມຄອງ ແລະ ປົກປັກຮັກສາສິ່ງແວດລ້ອມ ໃນຂອບເຂດດັ່ງກ່າວ ໃຫ້ໄປຕາມທິດສີຂຽວ, ຍືນຍົງ, ສະອາດ ແລະ ງາມຕາ;
4. ເຮັດວຽກງານ ປກຊ-ປກສ ໃຫ້ເຂດດັ່ງກ່າວມີຄວາມສະຫງົບປອດໄພ, ມີຄວາມເປັນລະບຽບຮຽບຮ້ອຍ, ປົກປັກຮັກສາວັດຖຸຊັບສິນຂອງລັດ, ນິຕິບຸກຄົນ, ບຸກຄົນ ທີ່ໄດ້ລົງທຶນໃສ່ຂອບເຂດສາຍນ້ຳຈັ້ງບໍລິເວນປ້ອງກັນຕາຝັ່ງເຈື່ອນ;
5. ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງອົງການປົກຄອງແຂວງໄຊສົມບູນ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານພູຫີວຊ້າງ ແລະ ບ້ານຜາສະຫງົບ**

1. ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງ;
2. ເປັນເຈົ້າການຕິດຕາມ, ກວດກາ ແລະ ຕັກເຕືອນ ຜູ້ລະເມີດ ຂໍ້ຕົກລົງສະບັບນີ້ ໃນຂອບເຂດສາຍ ນໍ້າຈັ້ງ ບໍລິເວນປ້ອງກັນຕາຝັ່ງເຈື່ອນແລ້ວລາຍງານຕໍ່ອົງການປົກຄອງເມືອງຊາບເພື່ອດໍາເນີນການແກ້ໄຂຢ່າງທັນການ;
3. ເປັນເຈົ້າການ ປູກຈິດສໍານຶກໃຫ້ປະຊາຊົນ ໃນການຄຸ້ມຄອງ ແລະ ປົກປັກຮັກສາ, ໂຄງສ້າງຂອງຕາຝັ່ງເຈື່ອນ, ສິ່ງແວດລ້ອມ ໃນຂອບເຂດດັ່ງກ່າວ ໃຫ້ໄປຕາມທິດສີຂຽວ, ຍືນຍົງ, ສະອາດງາມຕາ ແລະ ໜ້າຢູ່;
4. ເປັນເຈົ້າການຮັກສາຄວາມສະຫງົບ-ປອດໄພໃນຂອບເຂດດັ່ງກ່າວ;
5. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງອົງການປົກຄອງເມືອງອະນຸວົງ.

## ໝວດທີ 5
## ການກວດກາການຄຸ້ມຄອງສາຍນໍ້າຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ

**ມາດຕາ 19 ອົງການກວດກາການຄຸ້ມຄອງສາຍນໍ້າຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ**

ອົງການກວດກາການຄຸ້ມຄອງສາຍນໍ້າຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ປະກອບດ້ວຍ:

1) ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງສາຍນໍ້າຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.
2) ອົງການກວດກາພາຍນອກ ປະກອບມີ:
   - ສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງປະຈໍາເຂດເລືອກຕັ້ງເມືອງ;
   - ອົງການແນວລາວສ້າງຊາດແຂວງ, ອົງການແນວລາວສ້າງຊາດເມືອງ;
   - ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ອົງການຈັດຕັ້ງມະຫາຊົນຂັ້ນເມືອງ.

**ມາດຕາ 20 ເນື້ອໃນການກວດກາ**

- ການຈັດຕັ້ງປະຕິບັດ ແນວທາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຄຸ້ມຄອງສາຍນໍ້າຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ;
- ການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານຄຸ້ມຄອງສາຍນໍ້າຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ;
- ການປະກອບສ່ວນ ແລະ ການນໍາໃຊ້ວັດຖຸອຸປະກອນ, ພາຫະນະ, ທຶນ ແລະ ງົບປະມານ ເຂົ້າໃນວຽກງານຄຸ້ມຄອງສາຍນໍ້າຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ.

**ມາດຕາ 21 ຮູບການກວດກາ**

ການກວດກາການຄຸ້ມຄອງສາຍນໍ້າຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ມີ 3 ຮູບການ ຄື:

1) ກວດກາຕາມປົກກະຕິ:
   ກວດກາຕາມປົກກະຕິ ແມ່ນກວດກາຕາມແຜນການຢ່າງເປັນປະຈໍາ ແລະ ມີການກໍານົດເວລາທີ່ແນ່ນອນ;

2) ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ:
ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນກວດການອກແຜນການ ຊຶ່ງຕ້ອງໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3) ກວດກາແບບກະທັນຫັນ:
ກວດກາແບບກະທັນຫັນ ແມ່ນກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 22 ຂໍ້ຫ້າມ**

1. ທຸກການກະທຳທີ່ເປັນການທຳລາຍ ແລະ ແຕະຕ້ອງເຖິງໂຄງສ້າງ ຄູກັນນໍ້າ, ຮາກຖານ ແລະ ທຸກອົງປະກອບຕ່າງໆຂອງປ້ອງກັນຕາຝັ່ງເຈື່ອນ; ທຸກການກະທຳທີ່ເປັນການທຳລາຍເສັ້ນທາງ ແລະ ອົງປະກອບຕ່າງໆຂອງເສັ້ນທາງຢາງຂອງຝາກ;
2. ທຸກໆກິດຈະການກໍ່ສ້າງໃນໜ້ານໍ້າ, ເຂດປ້ອງກັນຕາຝັ່ງເຈື່ອນ, ປະຕູນໍ້າ, ຄູກັນນໍ້າ ທີ່ສ້າງຜົນກະທົບຕໍ່ການປ່ຽນແປງສະພາບຕາຝັ່ງ, ໂຄງສ້າງລະບົບປ້ອງກັນຕາຝັ່ງເຈື່ອນ, ລະບົບນິເວດວິທະຍາ, ສະພາບແວດລ້ອມ ຄື: ໂຄງການກໍ່ສ້າງເຮືອນປ້ານໍ້າ ແລະ ໂຄງການກໍ່ສ້າງອື່ນໆ;
3. ລ້ຽງປາກະຊັງ ແລະ ຫາປາ ໃນນໍ້າຈັ້ງບໍລິເວນປ້ອງກັນຕາຝັ່ງເຈື່ອນ;
4. ສ້າງຕາຫຼາດ ແລະ ຮ້ານຂາຍເຄື່ອງ ໃສ່ແຄມທາງຂອງເຂດປ້ອງກັນຕາຝັ່ງເຈື່ອນຫຼື ເຂດຄ້ອຍຊັນສັນຄູກັນນໍ້າ ແລະ ປະຕູນໍ້າ;
5. ການກໍ່ສ້າງອາຄານຮ້ານຄ້າ, ຕິດຕັ້ງປ້າຍປະເພດຕ່າງໆ ແລະ ອື່ນໆ ເປັນລັກສະນະຖາວອນມີຄວາມສູງໃສ່ແຄມນໍ້າຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ທີ່ຈະບັງທັດສະນີຍະພາບຂອງແຄມນໍ້າຈັ້ງ, ໃນກໍລະນີຈຳເປັນກໍ່ບໍ່ເກີນທີ່ທາງການອະນຸມັດ ບໍ່ໃຫ້ສູງເກີນໜ້າພຽງເຂດປ້ອງກັນຕາຝັ່ງເຈື່ອນ;
6. ບຸກຄົນ, ນິຕິບຸກຄົນ ແລະ ຜູ້ທີ່ໄດ້ຮັບສິດສຳປະທານ ກໍ່ສ້າງສິ່ງກີດຂວາງໃສ່ທາງຂຶ້ນ-ລົງ ຫຼື ເຂົ້າ-ອອກ ຂອງພາຫະນະ ແລະ ມວນຊົນ ທີ່ໄດ້ກຳນົດໄວ້ໃນ ມາດຕາ 9;
7. ທຸກກິດຈະການຢູ່ໃນເຂດສະຫງວນທາງປູຢາງສອງຊັ້ນຢູ່ 2 ຝາກ;
8. ການຈົກດິນອອກ, ຖົມດິນສູງກວ່າລະດັບທາງປູຢາງສອງຊັ້ນ ຢູ່ 2 ຝາກ,
9. ຖິ້ມຂີ້ເຫຍື້ອ ລົງໃນນໍ້າຈັ້ງ ແລະ ຂອບເຂດສາຍນໍ້າຈັ້ງ ບໍລິເວນປ້ອງກັນຕາຝັ່ງເຈື່ອນ;
10. ຖິ້ມ ສັດຕາຍ ລົງໃນນໍ້າຈັ້ງ ແລະ ຂອບເຂດສາຍນໍ້າຈັ້ງ ບໍລິເວນປ້ອງກັນຕາຝັ່ງເຈື່ອນ;
11. ທຸກກິດຈະການຂຸດຄົ້ນ ຫີນແຮ່-ຊາຍ, ດິນດຳ ຫຼື ການສ້າງບ່ອນເກັບມ້ຽນ ຫີນແຮ່-ຊາຍ ແລະ ດິນດຳ;
12. ສຳລັບສວນສາທາລະນະ 3 ແຫ່ງ ແມ່ນຫ້າມຈອດລົດ, ຂາຍອາຫານ, ເຄື່ອງທົ່ວໄປ ແລະ ຖິ້ມຂີ້ເຫຍື້ອ ຢູ່ນອກຈຸດທີ່ກຳນົດໄວ້;
13. ສ້າງສາງເກັບສິນຄ້າທຸກປະເພດ, ປ້ຳນໍ້າມັນ, ຮ້ານຂາຍເຄື່ອງກໍ່ສ້າງ, ຕິດຕັ້ງປ້າຍໂຄສະນາ ແລະ ອື່ນໆ ທີ່ເຫັນວ່າບໍ່ສວຍງາມ ແລະ ອາດເປັນອັນຕະລາຍຕໍ່ປະຊາຊົນ ແລະ ນັກທ່ອງທ່ຽວໃສ່ແຄມທາງສອງຝາກ;

14. ປ່ອຍນ້ຳເປື້ອນ, ນ້ຳມີສານເຄມີ, ນ້ຳໂສໂຄກ ແລະ ນ້ຳຂີ້ສິກ ທີ່ບໍ່ໄດ້ຜ່ານການບຳບັດ ແລະ ຮັບຮອງຄຸນນະພາບນ້ຳຈາກຂະແໜງການທີ່ກ່ຽວຂ້ອງ ລົງໃນນ້ຳຈັ້ງ;
15. ເຄື່ອນຍ້າຍ, ປົວແປງ, ທັບມ້າງ ທຸກສິ່ງກໍ່ສ້າງສາທະລະນຸປະໂຫຍດຢູ່ໃນສວນສາທາລະນະ ທັງ 3 ແຫ່ງ ແລະ ບໍລິເວນປ້ອງກັນຕາຝັ່ງເຈື່ອນ;
16. ປ່ອຍສັດລ້ຽງຂອງຕົນຊະຊາຍ ເຊັ່ນ: ງົວ, ຄວາຍ, ມ້າ, ແກ້, ແບ້, ໝູ ຊະຊາຍ ໃນນ້ຳຈັ້ງ ແລະ ຂອບເຂດສາຍນ້ຳຈັ້ງ ບໍລິເວນປ້ອງກັນຕາຝັ່ງເຈື່ອນ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 23 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ເກີດຜົນປະໂຫຍດອັນສູງສຸດຕໍ່ການພັດທະນາ ແລະ ສ້າງສາປະເທດຊາດ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍ ຕາມຄວາມເໝາະສົມ.

### ມາດຕາ 24 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ຫຼື ຖືກດຳເນີນຄະດີຕາມລະບຽບກົດໝາຍ.

### ມາດຕາ 25 ມາດຕະການກ່າວເຕືອນ ແລະ ສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດລະບຽບການ ເປັນຕົ້ນຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ທີ່ມີລັກສະນະເບົາບາງ ແລະ ເປັນການກະທຳຜິດຄັ້ງທຳອິດຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ຫຼາຍແຕ່ຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບ, ປ່ຽນແປງຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນ, ໃຊ້ແທນຄືນຕໍ່ຜົນເສຍຫາຍ ກໍ່ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ ໃຫ້ປັບປຸງແກ້ໄຂ ພ້ອມທັງເຮັດບົດບັນທຶກໄວ້.

### ມາດຕາ 26 ມາດຕະການທາງວິໄນ

ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຮັບຜິດຊອບວຽກຄຸ້ມຄອງ ແລະ ບໍລິຫານຕົວເມືອງ ຫຼື ເຈົ້າໜ້າທີ່ອື່ນທີ່ລະເມີດຂໍ້ຕົກລົງສະບັບນີ້ເປັນຕົ້ນຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນຕາມທີ່ລະບຸໄວ້ໃນກົດໝາຍ ເຊັ່ນ:

1. ກ່າວເຕືອນຄວາມຜິດຕາມລະບຽບການ ພ້ອມທັງບັນທຶກໄວ້ໃນຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນທີ່ຕຳແໜ່ງຕ່ຳກວ່າເກົ່າ;
4. ໃຫ້ອອກຈາກລັດຖະກອນໂດຍບໍ່ໄດ້ຮັບນະໂຍບາຍ.

ຜູ້ທີ່ຖືກປະຕິບັດວິໄນ ຈະຕ້ອງໄດ້ຄືນຊັບສິນທີ່ຕົນໄດ້ມາ ໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ການຈັດຕັ້ງໂດຍຄົບຖ້ວນ.

**ມາດຕາ 27 ມາດຕະການປັບໃໝ**

ມາດຕະການປັບໃໝຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ທຸກການກະທຳທີ່ເປັນການທຳລາຍ ແລະ ແຕະຕ້ອງເຖິງໂຄງສ້າງ ຄູກັນນ້ຳ, ຮາກຖານ ແລະ ທຸກອົງປະກອບຕ່າງໆຂອງປ້ອງກັນຕາຝັ່ງເຈື່ອນ; ທຸກການກະທຳທີ່ເປັນການທຳລາຍເສັ້ນທາງ ແລະ ອົງປະກອບຕ່າງໆຂອງເສັ້ນທາງຢາງຂອງຝາກ ຈະຖືກປັບໃໝ 500.000 ກີບ ຫາ 1.000.000 ກີບ/ຄັ້ງ ພ້ອມທັງຮັບຜິດຊອບຄ່າເສຍຫາຍທັງໝົດທີ່ເກີດຂຶ້ນ;
2. ທຸກໆກິດຈະການກໍ່ສ້າງໃນໜ້ານ້ຳ, ເຂດປ້ອງກັນຕາຝັ່ງເຈື່ອນ, ປະຕູນ້ຳ, ຄູກັນນ້ຳ ທີ່ສ້າງຜົນກະທົບຕໍ່ການປ່ຽນແປງສະພາບຕາຝັ່ງ, ໂຄງສ້າງລະບົບປ້ອງກັນຕາຝັ່ງເຈື່ອນ, ລະບົບນິເວດວິທະຍາ, ສະພາບແວດລ້ອມ ຄື: ໂຄງການກໍ່ສ້າງເຮືອນປ່ຳນ້ຳ ແລະ ໂຄງການກໍ່ສ້າງອື່ນໆ ຈະຖືກປັບໃໝ 500.000 ກີບ ຫາ 1.000.000 ກີບ/ຄັ້ງ ພ້ອມທັງໃຫ້ຮື້ຖອນອອກພາຍໃນ 7 ວັນ;
3. ລ້ຽງປາກະຊັງ ແລະ ຫາປາ ໃນນ້ຳຈັ້ງບໍລິເວນປ້ອງກັນຕາຝັ່ງເຈື່ອນ ຈະຖືກປັບໃໝ 100.000 ກີບ ຫາ 500.000 ກີບ/ຄັ້ງ;
4. ສ້າງຕາຫຼາດ ແລະ ຮ້ານຂາຍເຄື່ອງ ໃສ່ແຄມທາງຂອງເຂດປ້ອງກັນຕາຝັ່ງເຈື່ອນຫຼື ເຂດຄ້ອຍຊັນສັນຄູກັນນ້ຳ ແລະ ປະຕູນ້ຳ ຈະຖືກປັບໃໝ 300.000 ກີບ ຫາ 1.000.000 ກີບ/ຄັ້ງ;
5. ມີການກໍ່ສ້າງອາຄານຮ້ານຄ້າ, ຕິດຕັ້ງປ້າຍປະເພດຕ່າງໆ ແລະ ອື່ນໆ ເປັນລັກສະນະຖາວອນມີຄວາມສູງໃສ່ແຄມນ້ຳຈັ້ງ ແລະ ຂອບເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ທີ່ຈະບັງທິວທັດຂອງແຄມນ້ຳຈັ້ງ ຈະຖືກປັບໃໝ 500.000 ກີບ ຫາ 1.500.000 ກີບ/ຄັ້ງ;
6. ບຸກຄົນ, ນິຕິບຸກຄົນ ແລະ ຜູ້ທີ່ໄດ້ຮັບສິດສຳປະທານ ກໍ່ສ້າງສິ່ງກີດຂວາງໃສ່ທາງຂຶ້ນ-ລົງ ຫຼື ເຂົ້າ-ອອກ ຂອງພາຫະນະ ແລະ ມອບຊົນ ທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຈະຖືກປັບໃໝ 1.000.000 ກີບ/ຄັ້ງ ພ້ອມທັງໃຫ້ຮື້ຖອນອອກ;
7. ທຸກກິດຈະການຢູ່ໃນເຂດສະຫງວນທາງປູຢາງສອງຊັ້ນຢູ່ 2 ຝາກ ຈະຖືກປັບໃໝ ຕາມມາດຕາ 37 ຂອງດຳລັດ ສະບັບເລກທີ 185/ລບ, ລົງວັນທີ 20 ມິຖຸນາ 2022 ວ່າດ້ວຍ ເຂດສະຫງວນຂອງທາງຫຼວງ;
8. ການຈົກດິນອອກ, ຖົມດິນສູງກວ່າລະດັບທາງປູຢາງສອງຊັ້ນ ຢູ່ 2 ຝາກ ຈະຖືກປັບໃໝ ຈະຖືກປັບໃໝ 300.000 ກີບ ຫາ 1.000.000 ກີບ/ຄັ້ງ/ຈຸດ ພ້ອມທັງໃຫ້ຢຸດເຊົາ ແລະ ປັບແປງໃຫ້ຢູ່ໃນສະພາບເດີມພາຍໃນ 7 ວັນ;
9. ຖິ້ມຂີ້ເຫຍື້ອລົງໃນນ້ຳຈັ້ງ ແລະ ຂອບເຂດສາຍນ້ຳຈັ້ງ ບໍລິເວນປ້ອງກັນຕາຝັ່ງເຈື່ອນ ໃຫ້ປະຕິບັດດັ່ງນີ້:
   - ກອງ, ຖິ້ມຂີ້ເຫຍື້ອ ປະລິມານແຕ່ 1 ຖົງຂຶ້ນໄປ ຈະຖືກປັບໃໝ 100.000 ກີບ ຫາ 500.000 ກີບ/ຄັ້ງ ພ້ອມທັງອະນາໄມຄືນ;
   - ຖ້າໃຊ້ປະເພດລົດກະບະ, ລົດໄຖນາ, ລົດປະກອບທຸກປະເພດ ຂົນໄປຖິ້ມ ຈະຖືກປັບໃໝ 500.000 ກີບ/ຄັນ/ຄັ້ງ, ພ້ອມທັງອະນາໄມຄືນ;
   - ຖ້າໃຊ້ລົດບັນທຸກ 6 ລໍ້ ຂຶ້ນໄປ ຂົນໄປຖິ້ມ ຈະຖືກປັບໃໝ 1.000.000ກີບ/ຄັນ/ຄັ້ງ, ພ້ອມທັງອະນາໄມຄືນ;
   - ຖ້າພົບເຫັນອີກຄັ້ງທີ່ 2 ຈະຖືກປັບໃໝ 2 ເທົ່າຕົວຂອງມູນຄ່າປັບໃໝຂ້າງເທິງ.

10. ຖິ້ມສັດຕາຍ ລົງໃນນໍ້າຈັ້ງ ແລະ ຂອບເຂດສາຍນໍ້າຈັ້ງ ບໍລິເວນປ້ອງກັນຕາຝັ່ງເຈື່ອນ ຈະຖືກປັບໃໝ 200.000 ກີບ/ຄັ້ງ ພ້ອມທັງອະນາໄມຄືນ;
11. ທຸກກິດຈະການຂຸດຄົ້ນ ຫີນແຮ່-ຊາຍ, ດິນດໍາ ຫຼື ການສ້າງບ່ອນເກັບມ້ຽນ ຫີນແຮ່-ຊາຍ ແລະ ດິນດໍາ ມາດຕະການປັບໃໝໄດ້ກໍານົດໄວ້ໃນນິຕິກໍາຕ່າງຫາກ;
12. ສໍາລັບສວນສາທາລະນະ 3 ແຫ່ງ ຖ້າຈອດລົດ, ຂາຍອາຫານ, ເຄື່ອງທົ່ວໄປ ແລະ ຖິ້ມຂີ້ເຫຍື້ອ ຢູ່ນອກຈຸດທີ່ກໍານົດໄວ້ ຈະຖືກປັບໃໝ ຄື:
    - ຈອດລົດບໍ່ຖືກຈຸດທີ່ກໍານົດໄວ້ 50.000 ກີບ/ຄັ້ງ;
    - ຂາຍອາຫານ, ເຄື່ອງທົ່ວໄປ ແລະ ຖິ້ມຂີ້ເຫຍື້ອ ບໍ່ຖືກບ່ອນທີ່ກໍານົດໄວ້ 150.000 ກີບ - 500.000 ກີບ/ຄັ້ງ.
13. ປຸກສ້າງສາງເກັບສິນຄ້າທຸກປະເພດ, ປໍ້ານໍ້າມັນ, ຮ້ານຂາຍເຄື່ອງກໍ່ສ້າງ, ຕິດຕັ້ງປ້າຍໂຄສະນາ ແລະ ອື່ນໆ ທີ່ເຫັນວ່າບໍ່ສອຍງາມ ແລະ ອາດເປັນອັນຕາລາຍຕໍ່ປະຊາຊົນ ແລະ ນັກທ່ອງທ່ຽວ ໃສ່ແຄມທາງສອງຝາກ ແຕ່ບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຈະຖືກປັບໃໝຕາມ ມາດຕາ 34 ຂອງ ຂໍ້ຕົກລົງ ຂອງກະຊວງ ຍທຂ ສະບັບເລກທີ 2241/ຍທຂ, ລົງວັນທີ 31 ມັງກອນ 2019 ວ່າດ້ວຍການຄຸ້ມຄອງການປຸກສ້າງ;
14. ປ່ອຍນໍ້າເປື້ອນ, ນໍ້າມີສານເຄມີ, ນໍ້າໂສໂຄກ ແລະ ນໍ້າຂີ້ສິກ ທີ່ບໍ່ໄດ້ຜ່ານການບໍາບັດ ແລະ ຮັບຮອງຄຸນນະພາບນໍ້າຈາກຂະແໜງການທີ່ກ່ຽວຂ້ອງ ລົງໃນນໍ້າຈັ້ງ ຈະຖືກປັບໃໝ 300.000 ຫາ 800.000 ກີບ/ຄັ້ງ, ພ້ອມທັງປັບປຸງດັດແປງໃຫ້ຢູ່ໃນສະພາບດີ ພາຍໃນ 1 ເດືອນ;
15. ເຄື່ອນຍ້າຍ, ປັວແປງ, ທັບມ້າງ ທຸກສິ່ງກໍ່ສ້າງສາທະລະນຸປະໂຫຍດຢູ່ໃນສວນສາທາລະນະ ທັງ 3 ແຫ່ງ ແລະ ບໍລິເວນປ້ອງກັນຕາຝັ່ງເຈື່ອນ ຈະຖືກປັບໃໝ 500.000 ຫາ 1.000.000 ກີບ/ຄັ້ງ ພ້ອມທັງຮັບຜິດຊອບທົດແທນ ຫຼື ສ້ອມແປງໃຫ້ຢູ່ໃນສະພາບເດີມ.
16. ປ່ອຍສັດລ້ຽງຂອງຕົນຊະຊາຍ ຕາມເຂດບໍລິເວນປ້ອງກັນຕາຝັ່ງເຈື່ອນ ໂດຍບໍ່ມີຜູ້ຄຸ້ມຄອງ ເຊັ່ນ: ງົວ, ຄວາຍ, ມ້າ, ແກ້, ແບ້, ໝູ ຈະຖືກປັບໃໝມຄື:
    - ຄັ້ງທີ 1 : ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ປັບໃໝຄື: ງົວ, ຄວາຍ, ມ້າ 200.000 ກີບ/ຄັ້ງ/ໂຕ; ແກ້, ແບ້, ໝູ 100.000 ກີບ/ຄັ້ງ/ໂຕ;
    - ຄັ້ງທີ 2: ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ປັບໃໝຄື: ງົວ, ຄວາຍ, ມ້າ 500.000 ກີບ/ຄັ້ງ/ໂຕ; ແກ້, ແບ້, ໝູ 200.000 ກີບ/ຄັ້ງ/ໂຕ;
    - ຄັ້ງທີ 3: ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ດໍາເນີນຄະດີຕາມລະບຽບກົດໝາຍ ພ້ອມປັບໃໝຄື: ງົວ, ຄວາຍ, ມ້າ 1.000.000 ກີບ/ຄັ້ງ/ໂຕ; ແກ້, ແບ້, ໝູ 500.000 ກີບ/ຄັ້ງ/ໂຕ;
    - ກໍລະນີເຈົ້າໜ້າທີ່ຈັບສັດມາເພື່ອລໍຖ້າການໄກ່ເກ່ຍຈາກເຈົ້າຂອງສັດເຈົ້າຂອງສັດຕ້ອງຮັບຜິດຊອບຕໍ່ຄ່າສິ້ນເປືອງໃນການລ້ຽງສັດດັ່ງກ່າວ;
    - ກໍລະນີສັດດັ່ງກ່າວທີ່ຖືກຈັບຫາກຕາຍດ້ວຍເຫດຜົນອື່ນໆຜູ້ຈັບສັດຈະບໍ່ມີຄວາມຮັບຜິດຊອບປະການໃດ ແຕ່ຖ້າຜູ້ຈັບສັດຫາກທຸບຕີສັດຈົນລົ້ມຕາຍໂດຍບໍ່ມີເຫດຜົນຜູ້ນັ້ນຈະໄດ້ຮັບຜິດຊອບຕໍ່ສັດດັ່ງກ່າວນັ້ນ;

**ມາດຕາ 28 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ເຊິ່ງກໍ່ຄວາມເສຍຫາຍໃຫ້ແກ່ຊີວິດ ແລະ ຊັບສິນບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງອື່ນ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

**ມາດຕາ 29 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເຊິ່ງເປັນການກະທຳທາງອາຍາ ຈະຖືກດຳເນີນຄະດີຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍອາຍາ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 30 ການຈັດຕັ້ງປະຕິບັດ**

ບັນດາໂຄງການ ແລະ ກິດຈະການຕ່າງໆ ທີ່ໄດ້ຮັບອະນຸຍາດ ຫຼື ມີກ່ອນການປະກາດໃຊ້ຂໍ້ຕົກລົງສະບັບນີ້ໃຫ້ສືບຕໍ່ຈັດຕັ້ງປະຕິບັດ, ໃນກໍລະນີຖ້າຫາກຂັດກັບຂໍ້ຕົກລົງສະບັບນີ້ ຕ້ອງດັດແປງແກ້ໄຂໃຫ້ຖືກຕ້ອງ ແລະ ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ຈຶ່ງສາມາດດຳເນີນກິດຈະການຕໍ່ໄປໄດ້. ບັນດາເມືອງ, ພະແນກການ, ອົງການລັດທຽບເທົ່າພະແນກ, ກົມກອງ, ອົງການປົກຄອງບ້ານ 2 ບ້ານເຫດສະບານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມສະດວກ ແລະ ປະສານສົມທົບກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 31 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ຂໍ້ຕົກລົງໃດກ່ຽວກັບສາຍນ້ຳຈັ້ງຂອບເຂດບໍລິເວນຕາຝັ່ງເຈື່ອນ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ແມ່ນຖືວ່າໃຊ້ການບໍ່ໄດ້ ແລະ ຖືກລົບລ້າງ.

**ເຈົ້າແຂວງໄຊສົມບູນ**

ພອຍຄຳ ຮຸ່ງບຸນຍວງ